ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະປ່າໄມ້ ເລກທີ 1970 /ກປ

ນະຄອນຫຼວງວຽງຈັນ, ວັນທີ 18 AUG 2015

# ຂໍ້ຕົກລົງ

## ວ່າດ້ວຍລະບຽບການ ຕິດຕາມ ແລະກວດກາ ໂຄງການລົງທຶນຂອງລັດແຕ່ຫົວທີ ໃນຂະແໜງການກະສິກຳ ແລະປ່າໄມ້

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 262/ນຍ, ລົງວັນທີ 28 ມິຖຸນາ 2012 ວ່າດ້ວຍການຈັດຕັ້ງ ແລະການເຄື່ອນໄຫວຂອງກະຊວງກະສິກຳ ແລະປ່າໄມ້;
- ອີງຕາມດຳລັດຂອງລັດຖະບານ ເລກທີ 01/ລບ, ລົງວັນທີ 06 ມັງກອນ 2015 ວ່າດ້ວຍການຕິດຕາມກວດກາໂຄງການລົງທຶນຂອງລັດ ເລີ່ມແຕ່ຫົວທີ;
- ອີງຕາມບົດແນະນຳຂອງອົງການກວດກາລັດຖະບານ ເລກທີ 46/ອກລ, ລົງວັນທີ 04 ມີນາ 2015 ວ່າດ້ວຍການຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ເລກທີ 01/ລບ;
- ອີງຕາມໜັງສືສະເໜີຂອງກົມກວດກາ ເລກທີ 0320/ກກກ, ລົງວັນທີ 16 ກໍລະກົດ 2015.

### ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຂັ້ນຕອນ, ວິທີການ, ສິດ ແລະໜ້າທີ່ ຂອງຄະນະຕິດຕາມກວດກາໂຄງການລົງ ທຶນຂອງລັດແຕ່ຫົວທີໃນຂະແໜງການກະສິກຳ ແລະປ່າໄມ້ ເພື່ອຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ, ແນໃສ່ສະກັດກັ້ນ ບໍ່ໃຫ້ມີການລະເມີດລະບຽບກົດໝາຍ ປະກອບສ່ວນເຂົ້າໃນການພັດທະນາຂະແໜງການ ໃຫ້ຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ມາດຕາ 2 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບຄະນະຕິດຕາມ ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຂອງຂະແໜງການກະສິກຳ ແລະປ່າໄມ້ ທີ່ຖືກແຕ່ງຕັ້ງຈາກອົງການທີ່ມີສິດອຳນາດ.

**ມາດຕາ 3 ມາດຕະຖານ ແລະເງື່ອນໄຂ ສຳລັບພະນັກງານ ຕິດຕາມກວດກາ ໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ**

ຜູ້ທີ່ຈະເປັນພະນັກງານ ຕິດຕາມກວດກາໂຄງການລົງທຶນຂອງລັດແຕ່ຫົວທີ ໃນຂະແໜງການກະສິກຳ ແລະປ່າໄມ້ ຕ້ອງມີມາດຕະຖານ ແລະເງື່ອນໄຂຕົ້ນຕໍ ດັ່ງນີ້:

1. ມີຄວາມຈົງຮັກພັກດີຕໍ່ປະເທດຊາດ, ກຳແໜ້ນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ມີທັດສະນະຫຼັກໝັ້ນການເມືອງໜັກແໜ້ນ ແລະມີຄຸນສົມບັດສິນທຳປະຕິວັດ;

2. ເປັນພະນັກງານສັງກັດລັດ ທີ່ມີຄວາມຮູ້ - ຄວາມສາມາດ ໃນລະດັບອັນແນ່ນອນ ແລະມີປະສົບການໃນການຕິດຕາມກວດກາ ໂຄງການມາກ່ອນ ຫຼືຮັບຜິດຊອບກ່ຽວກັບວຽກງານໂຄງການລົງທຶນຂອງລັດມາກ່ອນ;

3. ມີຄວາມຮັບຜິດຊອບສູງ, ບໍລິສຸດ - ສັດຊື່, ໂປ່ງໃສ, ມີຄວາມຍຸຕິທໍາ, ຮັກສາຄວາມລັບ ແລະເປັນແບບຢ່າງໃນການປະຕິບັດບັນດາລະບຽບກົດໝາຍ;

4. ບໍ່ເຄີຍຖືກປະຕິບັດວິໄນສະຖານໜັກ, ບໍ່ເຄີຍລະເມີດກົດໝາຍແພ່ງ ແລະບໍ່ເຄີຍຖືກສານຕັດສິດສະລະພາບກ່ຽວກັບພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ.

## ໝວດທີ 2
## ຂັ້ນຕອນ ແລະວິທີການຕິດຕາມກວດກາ

### ມາດຕາ 4 ຂັ້ນຕອນການຕິດຕາມກວດກາໂຄງການລົງທຶນຂອງລັດ

ການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫ້ອງທີ ໃນຂະແໜງການກະສິກໍາ ແລະປ່າໄມ້ ຕ້ອງດໍາເນີນຕາມຂັ້ນຕອນ ດັ່ງນີ້:

1. ການກະກຽມ;
2. ການດໍາເນີນການກວດກາ;
3. ການສະຫຼຸບຜົນການກວດກາ.

### ມາດຕາ 5 ການກະກຽມ

ກ່ອນຈະດໍາເນີນການຕິດຕາມກວດກາ ພະນັກງານກວດກາ ແລະຄະນະຕິດຕາມກວດກາ ຕ້ອງກະກຽມເນື້ອໃນ ແຕ່ລະດ້ານດັ່ງນີ້:

1. ເກັບກໍາຂໍ້ມູນ, ຄົ້ນຄ້ວາ, ເຊື່ອມຊຶມ, ວິເຄາະ, ວິໄຈ ແລະກໍາແໜ້ນ ເນື້ອໃນເອກະສານກ່ຽວກັບໂຄງການທີ່ຈະຕິດຕາມກວດກາ ເຊັ່ນ:

— ບົດສະເໜີໂຄງການ ຕ້ອງກໍາແໜ້ນ ຈຸດປະສົງ, ຄາດໝາຍ, ວິທີການຈັດຕັ້ງປະຕິບັດ, ຄວາມສອດຄ່ອງ, ປະສິດທິພາບ, ປະສິດທິຜົນ, ຜົນກະທົບ, ຄວາມຍືນຍົງ ແລະຜົນໄດ້ຮັບຈາກການຈັດຕັ້ງປະຕິບັດໂຄງການ;

— ບົດສຶກສາຄວາມເປັນໄປໄດ້ຂອງໂຄງການ ຕ້ອງກໍາແໜ້ນເງື່ອນໄຂຕ່າງໆພາຍໃນທີ່ໄດ້ກໍານົດໄວ້ໃນແຕ່ລະພາກສ່ວນສະໜອງ, ພາລະບົດບາດຂອງເຈົ້າຂອງໂຄງການ, ທີ່ປຶກສາໂຄງການ, ຜູ້ຮັບເໝົາກໍ່ສ້າງ ແລະຜູ້ສະໜອງວັດສະດຸກໍ່ສ້າງ;

— ບົດວິພາກເສດຖະກິດ - ເຕັກນິກ ຕ້ອງກໍາແໜ້ນມູນຄ່າໂຄງການ, ຜົນໄດ້, ຜົນເສຍ, ການກໍານົດເຕັກນິກຂອງໂຄງການ;

— ບົດປະເມີນຜົນກະທົບຂອງໂຄງການ ຕໍ່ເສດຖະກິດ, ສັງຄົມ ແລະສິ່ງແວດລ້ອມ ເປັນຕົ້ນ ທາງດ້ານການດໍາລົງຊີວິດຂອງປະຊາຊົນ ໃນບໍລິເວນທີ່ຕິດພັນກັບໂຄງການ ແລະສິດການນໍາໃຊ້ຊັບພະຍາກອນທໍາມະຊາດ;

— ເອກະສານການຈັດຊື້ - ຈັດຈ້າງ ຕ້ອງກໍາແໜ້ນ ການແຕ່ງຕັ້ງຄະນະຮັບຜິດຊອບ, ການແຕ່ງຕັ້ງຄະນະປະມູນ, ການກໍານົດພາລະບົດບາດ, ສິດຂອບເຂດຂອງຄະນະຮັບຜິດຊອບ ແລະຄະນະປະມູນ, ການອອກແຈ້ງການປະມູນ, ວັນເວລາຮັບ - ເປີດຊອງປະມູນ, ການເປີດຊອງປະມູນ, ການບັນທຶກຜົນການປະມູນ, ການລາຍງານຜົນການປະມູນ, ການຕົກລົງຮັບຮອງເອົາຜູ້ຊະນະປະມູນ, ເອກະສານສັນຍາການກໍ່ສ້າງ ແລະເອກະສານສັ່ງວຽກ ໂດຍລວມແມ່ນຖືກຕ້ອງສອດຄ່ອງກັບ ດໍາລັດ ເລກທີ 03/ນຍ, ລົງວັນທີ 9 ມັງກອນ 2004 ວ່າດ້ວຍການປະມູນຈັດຊື້ສິນຄ້າ, ການກໍ່ສ້າງ, ການສ້ອມແປງ ແລະການບໍລິການດ້ວຍທຶນຂອງລັດ ແລ້ວຫຼືບໍ່ ?;

2. ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ, ພາກສ່ວນທີ່ກ່ຽວຂ້ອງ ແລະປະຊາຊົນໃນຂອບເຂດອ້ອມຂ້າງບ່ອນໂຄງການຕັ້ງຢູ່ ເພື່ອເກັບກໍາຂໍ້ມູນຜົນກະທົບຕໍ່ການເຄື່ອນໄຫວ ແລະດໍາລົງຊີວິດຂອງປະຊາຊົນ;4ໆ

3. ສັງລວມບັນຫາຕ່າງໆ ເພື່ອສ້າງເປັນແຜນການເຄື່ອນໄຫວ, ກຳນົດແຜນວຽກ, ເປົ້າໝາຍ ທີ່ຈະຕ້ອງໄດ້ກວດກາ, ກຳນົດວັນເວລາ, ສະຖານທີ່ກວດກາ, ກຳນົດແຜນຄົນ, ງົບປະມານ, ອຸປະກອນ ແລະພາຫະນະຮັບໃຊ້ວຽກງານດັ່ງກ່າວ;

4. ສະເໜີຂັ້ນເທິງ ອອກຂໍ້ຕົກລົງແຕ່ງຕັ້ງຄະນະຕິດຕາມກວດກາໂຄງການເລີ່ມແຕ່ຫົວທີ;

5. ຜ່ານແຜນການ ແລະແບ່ງຄວາມຮັບຜິດຊອບພາຍໃນ ຄະນະຕິດຕາມກວດການມອບໝາຍ ຕາມໜ້າວຽກ, ຄວາມຮູ້ ແລະຄວາມສາມາດຂອງພະນັກງານ ທີ່ເຂົ້າຮ່ວມເປັນຄະນະຕິດຕາມກວດກາ.

**ມາດຕາ 6 ການດຳເນີນການກວດກາ**

ໃນການດຳເນີນການຕິດຕາມກວດກາ ພະນັກງານ ແລະຄະນະຮັບຜິດຊອບຕິດຕາມກວດກາ ຕ້ອງດຳເນີນການຕາມຂັ້ນຕອນ ດັ່ງນີ້:

1. ແຈ້ງຂໍ້ຕົກລົງ ໃຫ້ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາ, ຜູ້ຮັບເໝົາກໍ່ສ້າງຊາບ ເຖິງຈຸດປະສົງ, ເນື້ອໃນ, ແຜນການເຄື່ອນໄຫວ, ຄວາມຕ້ອງການດ້ານຂໍ້ມູນ, ບ່ອນເຮັດວຽກ, ຜູ້ຮ່ວມເຮັດວຽກ, ກຳນົດເວລາເຮັດວຽກ, ຮັບຟັງການລາຍງານຈາກເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາ, ກຳມະກອນ, ຊຸ່ມຊົນ ເພື່ອກຳແໜ້ນຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ, ແຜນການ, ໜ້າວຽກ ແລະຂັ້ນຕອນການຈັດຕັ້ງປະຕິບັດ;

2. ດຳເນີນການກວດກາຕົວຈິງໃນແຕ່ລະໜ້າວຽກສຳຄັນ ເຊັ່ນ:

— ກວດກາ ການແຕ່ງຕັ້ງຄະນະຮັບຜິດຊອບໂຄງການລົງທຶນຂອງລັດ, ການແບ່ງຄວາມຮັບຜິດຊອບ ໂດຍການກຳນົດແບບແຜນວິທີການເຮັດວຽກ ຢ່າງຖືກຕ້ອງສອດຄ່ອງກັບລະບຽບຫຼັກການ;

— ກວດກາການປະມູນ, ການຈັດຊື້ - ຈັດຈ້າງ ສົມທຽບໃສ່ ລະບຽບຫຼັກການຂອງລັດວາງອອກ;

— ກວດກາການປະຕິບັດສິດ ແລະໜ້າທີ່ ຂອງຜູ້ປະຕິບັດໂຄງການ ເຊັ່ນ: ເຈົ້າຂອງໂຄງການ, ຄະນະຮັບຜິດຊອບໂຄງການ, ບໍລິສັດທີ່ປຶກສາໂຄງການ ແລະບໍລິສັດຮັບເໝົາກໍ່ສ້າງ;

— ກວດກາການປະຕິບັດສັນຍາ, ຄຸນນະພາບຂອງວຽກ, ເຕັກນິກ, ການນຳໃຊ້ວັດສະດຸເຂົ້າໃນການກໍ່ສ້າງ, ຜົນສຳເລັດ, ການຊຳລະສະສາງ ແລະການປະຕິບັດພັນທະຕ່າງໆ.

**ມາດຕາ 7 ການສະຫຼຸບຜົນການຕິດຕາມກວດກາ**

ໃນການກວດກາແຕ່ລະຄັ້ງ ຜູ້ກວດກາ ແລະຄະນະຮັບຜິດຊອບຕິດຕາມກວດກາ ຕ້ອງຄົ້ນຄວ້າ, ສັງລວມ ແລະເຮັດບົດບັນທຶກການກວດກາໃນແຕ່ລະໜ້າວຽກ ໂດຍໃຫ້ເຫັນໄດ້ດ້ານດີ, ຜົນງານ, ດ້ານອ່ອນ, ຂໍ້ຄົງຄ້າງ ແລະຂໍ້ສະເໜີວິທີການແກ້ໄຂ.

ບົດສະຫຼຸບຜົນການຕິດຕາມກວດກາ ຕ້ອງໄດ້ຜ່ານກັນພາຍໃນຄະນະຕິດຕາມກວດກາ ເພື່ອຄວາມເປັນເອກະພາບກັນແລ້ວສົ່ງໃຫ້ຜູ້ປະຕິບັດໂຄງການ ມີຄວາມເຫັນເປັນເອກະພາບ ແລະເຊັນບົດບັນທຶກຮ່ວມກັນ, ຫຼັງຈາກນັ້ນ ຈຶ່ງລາຍງານໃຫ້ຜູ້ອອກຂໍ້ຕົກລົງ ເພື່ອພິຈາລະນາແກ້ໄຂ ແລະສົ່ງຜົນການແກ້ໄຂ ໃຫ້ຜູ້ປະຕິບັດໂຄງການຊາບ ແລະຈັດຕັ້ງປະຕິບັດ ໂດຍມີການຕິດຕາມກວດກາຢ່າງເຂັ້ມງວດ.

**ມາດຕາ 8 ວິທີການຕິດຕາມກວດກາ**

ໃນການຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ຜູ້ກວດກາ ແລະຄະນະຮັບຜິດຊອບຕິດຕາມກວດກາ ຕ້ອງປະຕິບັດວິທີການສຳຄັນ ດັ່ງນີ້:

1. ໃກ້ຊິດຕິດແທດກັບຜູ້ປະຕິບັດໂຄງການ, ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອໃຫ້ຮູ້ຄວາມເປັນມາຂອງໂຄງການ, ສິດ, ໜ້າທີ່ ແລະຄວາມຮັບຜິດຊອບຂອງຜູ້ປະຕິບັດໂຄງການໃນແຕ່ລະພາກສ່ວນ, ຮູ້ໄດ້ແບບວິທີການຈັດຕັ້ງປະຕິບັດໂຄງການ, ມູນຄ່າໂຄງການ, ໄລຍະການຈັດຕັ້ງປະຕິບັດໂຄງການ, ສະພາບເງື່ອນໄຂຄວາມເປັນໄປໄດ້, ຂໍ້ຈຳກັດ, ວິທີການແກ້ໄຂ ຂອງຜູ້ປະຕິບັດໂຄງການ, ບັນຫາຜົນກະທົບຕໍ່ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະການ

ທຳມາຫາກິນຂອງປະຊາຊົນ;

2. ລົງຕິດຕາມກວດກາການປະຕິບັດໂຄງການເປັນແຕ່ລະໄລຍະ ໂດຍສົມທຽບໜ້າວຽກທີ່ກຳນົດໄວ້ໃນສັນຍາ ແລະໜ້າວຽກທີ່ໄດ້ປະຕິບັດຕົວຈິງ ໃຫ້ເຫັນໄດ້ອັນໃດປະຕິບັດຕາມສັນຍາ, ວຽກໃດບໍ່ຢູ່ໃນສັນຍາ ໄດ້ມີການສະເໜີດັດແກ້ສັນຍາຄືແນວໃດ;

3. ໃຫ້ຄຳປຶກສາຫາລື ແລະ ສະເໜີຕໍ່ຜູ້ປະຕິບັດໂຄງການ ຫາກເຫັນວ່າ ການກໍ່ສ້າງຈະບໍ່ໄປຕາມການສຳຫຼວດ-ອອກແບບ, ບໍ່ໄປຕາມສັນຍາ, ບໍ່ໄປຕາມມາດຖານເຕັກນິກ, ບໍ່ໄປຕາມຂັ້ນຕອນ ທີ່ໄດ້ກຳນົດໄວ້ໃນບົດວິພາກເສດຖະກິດເຕັກນິກ ແລະ ອື່ນໆ;

4. ຮ່ວມກັບເຈົ້າຂອງໂຄງການ, ຜູ້ຮັບຜິດຊອບໂຄງການກວດກາກ່ອນການມອບ - ຮັບ.

## ໝວດທີ 3
## ສິດ, ໜ້າທີ່ ແລະຂໍ້ຫ້າມຂອງຄະນະຕິດຕາມກວດກາ

### ມາດຕາ 9 ສິດ ແລະໜ້າທີ່

ຜູ້ກວດກາ ແລະຄະນະຮັບຜິດຊອບຕິດຕາມກວດກາ ທີ່ໄດ້ຮັບການແຕ່ງຕັ້ງໃຫ້ກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ໃດໜຶ່ງ ມີສິດ ແລະໜ້າທີ່ຕົ້ນຕໍ ດັ່ງນີ້:

1. ແຈ້ງຂໍ້ຕົກລົງ, ແຜນການຕິດຕາມກວດກາ, ປຶກສາຫາລືກັບ ຜູ້ປະຕິບັດໂຄງການ;

2. ດຳເນີນການຕິດຕາມ ກວດກາ ຕາມແຜນການ, ຂັ້ນຕອນ ທີ່ໄດ້ກຳນົດໄວ້;

3. ສະເໜີໃຫ້ຜູ້ປະຕິບັດໂຄງການ, ອົງການຈັດຕັ້ງ ແລະບຸກຄົນທີ່ກ່ຽວຂ້ອງ ລາຍງານສະພາບການ, ສະໜອງຂໍ້ມູນ, ເອກະສານຕ່າງໆ ແລະ ຕອບຄຳຖາມເຈາະຈີ້ມ ກ່ຽວກັບການຕິດຕາມກວດກາໂຄງການ;

4. ປະສານສົມທົບກັບຜູ້ປະຕິບັດໂຄງການ ລົງຕິດຕາມກວດກາໂດຍກົງຕໍ່ໜ້າວຽກໃດໜຶ່ງຂອງໂຄງ ການທີ່ເຫັນວ່າມີຄວາມສຳຄັນ ແລະ ຈຳເປັນ;

5. ເຂົ້າຮ່ວມກອງປະຊຸມຂອງ ຜູ້ປະຕິບັດໂຄງການ ທີ່ຈັດຂຶ້ນແຕ່ລະຄັ້ງ;

6. ສະເໜີໃຫ້ຜູ້ປະຕິບັດໂຄງການ, ອຳນາດການປົກຄອງທ້ອງຖິ່ນ ອຳນວຍຄວາມສະດວກໃນເມື່ອລົງປະຕິບັດໜ້າທີ່ຢູ່ພື້ນທີ່ຕ່າງໆ ບ່ອນໂຄງການຕັ້ງຢູ່;

7. ສັ່ງໂຈະຊົ່ວຄາວ ໃນເມື່ອກວດກາພົບເຫັນ ການປະຕິບັດໂຄງການ ທີ່ບໍ່ຖືກຕ້ອງຕາມລະບຽບຫຼັກການ, ບົດວິພາກເສດຖະກິດເຕັກນິກ, ບົດສະເໜີໂຄງການ, ສັນຍາທີ່ກຳນົດໄວ້, ແຕ່ຕ້ອງລາຍງານໃຫ້ຜູ້ອອກຂໍ້ຕົກລົງພາຍໃນ 24 ຊົ່ວໂມງ;

8. ສະຫຼຸບລາຍງານຜົນຂອງການຕິດຕາມກວດກາ ໃຫ້ຂັ້ນເທິງຂອງຕົນເປັນປົກກະຕິ ເພື່ອມີທິດຊີ້ນຳ ແລະພິຈາລະນາແກ້ໄຂໃຫ້ທັນເວລາ, ພ້ອມທັງສືບຕໍ່ຕິດຕາມການຈັດຕັ້ງປະຕິບັດ ຜົນຂອງການແກ້ໄຂດັ່ງກ່າວ;

9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະຕາມການມອບໝາຍຂອງການຈັດຕັ້ງຂັ້ນເທິງ.

### ມາດຕາ 10 ຂໍ້ຫ້າມສຳລັບຄະນະຕິດຕາມກວດກາ

ຫ້າມພະນັກງານຕິດຕາມກວດກາ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່, ຄວາມຮັບຜິດຊອບໃນການຕິດຕາມກວດກາ ເກີນຂອບເຂດສິດທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງ ຫຼືລະເມີດກົດໝາຍ, ລະບຽບການ ກ່ຽວກັບວຽກງານກວດກາ;

2. ສວຍໃຊ້ໜ້າທີ່ຕຳແໜ່ງ ບັງຄັບ, ນາບຂູ່ຕໍ່ຜູ້ຈັດຕັ້ງປະຕິບັດໂຄງການ ເພື່ອຫາຜົນປະໂຫຍດໃຫ້ແກ່ຕົນເອງ, ໝູ່ຄູ່, ຍາດພີ່ນ້ອງ ແລະ ພັກພວກ;

3. ໜີປະໜ້າທີ່ ຫຼືໄປຮັບຜິດຊອບໜ້າທີ່ອື່ນ ໃນໄລຍະມີຂໍ້ຕົກລົງໃຫ້ປະຕິບັດໜ້າທີ່ຕິດຕາມກວດກາໂຄງ 4ໆ

ການ ໂດຍບໍ່ໄດ້ຮັບການອະນຸຍາດຈາກກົມ, ກອງ ທີ່ສັງກັດຢູ່;

4. ຂໍ ແລະຮັບສິນບົນ, ປົກປິດ ຫຼືເຊື່ອງອຳຂໍ້ມູນ, ຫຼົກຖາມ ຫຼືລາຍງານບໍ່ຖືກກັບຄວາມຈິງ, ບໍ່ໃຫ້ການຮ່ວມມືກັບການຈັດຕັ້ງທີ່ກ່ຽວຂ້ອງໃນການປະຕິບັດໜ້າທີ່;

5. ມີພຶດຕິກຳອື່ນໆ ທີ່ເປັນການລະເມີດກົດໝາຍ ແລະລະບຽບການ.

## ໝວດທີ 4
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະມາດຕະການຕໍ່ຜູ້ລະເມີດ

**ມາດຕາ 11 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນ ຈັດຕັ້ງປະຕິບັດວຽກງານຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີໃນຂະແໜງການກະສິກຳ ແລະປ່າໄມ້ ຈະໄດ້ຮັບການຍ້ອງຍໍ ຫຼືນະໂຍບາຍອື່ນ ຕາມຄວາມເໝາະສົມ.

**ມາດຕາ 12 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼືການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກຕັກເຕືອນ, ສຶກສາອົບຮົມ, ປະຕິບັດວິໄນ, ປັບໃໝ, ໃຊ້ແທນຄວາມເສຍຫາຍທາງແພ່ງ ຫຼືລົງໂທດທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ຕາມທີ່ໄດ້ລະບຸໄວ້ໃນລະບຽບກົດໝາຍ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 13 ການຈັດຕັ້ງປະຕິບັດ**

ໃຫ້ກົມກວດກາ ເປັນເຈົ້າການປະສານສົມທົບກັບ ຫ້ອງການ, ບັນດາກົມ, ສະຖາບັນ, ພະແນກ ກະສິກຳ ແລະປ່າໄມ້ປະຈຳແຂວງ, ນະຄອນຫຼວງ ແລະຫ້ອງການກະສິກຳ ແລະປ່າໄມ້ປະຈຳເມືອງ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ສຳລັບ ງົບປະມານຮັບໃຊ້ໃຫ້ແກ່ຄະນະຕິດຕາມກວດກາໂຄງການລົງທຶນຂອງລັດເລີ່ມແຕ່ຫົວທີ ໃນຂະແໜງການກະສິກຳ ແລະປ່າໄມ້ ແມ່ນໃຫ້ນຳໃຊ້ງົບປະມານທີ່ຂຶ້ນໄວ້ຂອງໂຄງການ. ການນຳໃຊ້ຕົວຈິງ ແມ່ນປະຕິບັດຕາມລະບຽບການທີ່ ກະຊວງການເງິນ ແລະກະຊວງແຜນການ ແລະການລົງທຶນ ປະກາດໃຊ້ໃນແຕ່ລະໄລຍະ ຕາມທີ່ໄດ້ກຳນົດໄວ້ໃນ ບົດແນະນຳຂອງອົງການກວດກາລັດຖະບານ ເລກທີ 46/ອກລ, ລົງວັນທີ 04 ມີນາ 2015 ວ່າດ້ວຍການຈັດຕັ້ງປະຕິບັດດຳລັດຂອງລັດຖະບານ ເລກທີ 01/ລບ.

**ມາດຕາ 14 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງກະສິກຳ ແລະປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ວິໄລວັນ ພົມເຂ